ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 1517 /ກງ

ນະຄອນຫຼວງວຽງຈັນ, ວັນທີ 22 MAY 2018

# ແຈ້ງການ

ເຖິງ : - ບັນດາທ່ານ ລັດຖະມົນຕີ ແລະ ທຽບເທົ່າ, ເຈົ້າແຂວງ, ເຈົ້າຄອງນະຄອນຫລວງວຽງຈັນ.
- ທະນາຄານ ແຫ່ງ ສປປ ລາວ, ບັນດາທະນາຄານທຸລະກິດຂອງລັດ ແລະ ທະນາຄານທຸລະກິດ ໃນຂອບເຂດທົ່ວປະເທດ.

ເລື່ອງ : ການ ເປີດ-ປິດ ບັນຊີເງິນຝາກຂອງບັນດາຫົວໜ່ວຍງົບປະມານ, ຂະແໜງການ ຢູ່ສູນກາງ ແລະ ທ້ອງຖິ່ນ ທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ຢູ່ລະບົບທະນາຄານ ໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍຄັງເງິນແຫ່ງຊາດ ສະບັບເລກທີ 259/ນຍ ລົງວັນທີ 01 ມິຖຸນາ 2010;
- ອີງຕາມ ໜັງສືສະເໜີ ຂອງຄັງເງິນແຫ່ງຊາດ ສະບັບເລກທີ 2148/ຄງຊ ລົງວັນທີ 16 ພຶດສະພາ 2018.

ເພື່ອ ເປັນບ່ອນອີງໃຫ້ແກ່ ບັນດາຫົວໜ່ວຍງົບປະມານ, ຂະແໜງການ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ແບ່ງຄວາມຮັບຜິດຊອບໃຫ້ພາກສ່ວນກ່ຽວຂ້ອງໃນການປະຕິບັດແຜນງານ/ໂຄງການ ທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ)ໃຫ້ຮັບປະກັນດຳເນີນໄປຢ່າງຖ່ອງຕົວ, ມີປະສິດທິຜົນ, ໂປ່ງໃສ, ສາມາດກວດສອບໄດ້ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີ ອອກແຈ້ງການດັ່ງນີ້ :

1. ບັນດາຫົວໜ່ວຍງົບປະມານ, ຂະແໜງການ ທີ່ຂຶ້ນກັບບັນດາກະຊວງ ແລະ ທຽບເທົ່າ ທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ເຈົ້າຂອງໂຄງການ) ມີຈຸດປະສົງ ຂໍເປີດບັນຊີໃໝ່ ເພື່ອຮອງຮັບເອົາທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ) ໃຫ້ສະເໜີຄັງເງິນແຫ່ງຊາດ ຄົ້ນຄ້ວາ ພິຈາລະນາ ແລະ ນຳສະເໜີ ທະນາຄານແຫ່ງ ສປປ ລາວ ເປີດບັນຊີສະເພາະ;
2. ທະນາຄານແຫ່ງ ສປປ ລາວ ແຈ້ງເລກບັນຊີສະເພາະ ຂອງພາກສ່ວນຄຸ້ມຄອງແຜນງານ/ໂຄງການ ໃຫ້ຫົວໜ່ວຍງົບປະມານ (ເຈົ້າຂອງໂຄງການ) ເພື່ອແຈ້ງເລກບັນຊີໃຫ້ຜູ້ໃຫ້ທຶນ ແລະ ຄັງເງິນແຫ່ງຊາດ ເພື່ອຄຸ້ມຄອງ ແລະ ຕິດຕາມ;

3. ການເປີດບັນຊີເງິນຝາກບໍລິຫານໂຄງການ ຢູ່ທະນາຄານທຸລະກິດຂອງລັດ ແລະ ທະນາຄານທຸລະກິດ(ສຳນັກງານໃຫຍ່) ໃຫ້ຫົວໜ່ວຍງົບປະມານ (ເຈົ້າຂອງໂຄງການ) ສະເໜີເຖິງ ຄັງເງິນແຫ່ງຊາດ ຄົ້ນຄ້ວາພິຈາລະນາ ແລະ ນຳສະເໜີທະນາຄານທຸລະກິດຂອງລັດ ແລະ ທະນາຄານທຸລະກິດ(ສຳນັກງານໃຫຍ່) ເປີດບັນຊີເງິນຝາກບໍລິຫານໂຄງການ;

4. ຄັງເງິນແຫ່ງຊາດ ຄຸ້ມຄອງ, ຕິດຕາມການ ເປີດ-ປິດ ບັນຊີສະເພາະ ຢູ່ທະນາຄານແຫ່ງ ສປປ ລາວ, ບັນຊີເງິນຝາກບໍລິຫານໂຄງການ ຢູ່ທະນາຄານທຸລະກິດຂອງລັດ ແລະ ທະນາຄານທຸລະກິດ(ສຳນັກງານໃຫຍ່) ຂອງບັນດາຫົວໜ່ວຍງົບປະມານ ທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ;

5. ສະເພາະການ ເປີດ-ປິດ ບັນຊີເງິນຝາກບໍລິຫານໂຄງການຢູ່ຂັ້ນທ້ອງຖິ່ນ ທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ຫົວໜ່ວຍງົບປະມານ, ພາກສ່ວນຄຸ້ມຄອງແຜນງານ/ໂຄງການ (ເຈົ້າຂອງໂຄງການ) ສະເໜີເຖິງສາຂາທະນາຄານ, ມອບໃຫ້ສາຂາທະນາຄານເປັນຜູ້ພິຈາລະນາເປີດບັນຊີຕາມລະບຽບການຂອງທະນາຄານ ໂດຍບໍ່ຜ່ານຄັງເງິນແຫ່ງຊາດ; ຈາກນັ້ນໃຫ້ແຈ້ງເລກບັນຊີດັ່ງກ່າວໃຫ້ພາກສ່ວນກ່ຽວຂ້ອງ ຮັບຊາບ.

6. ໃຫ້ບັນດາລັດຖະມົນຕີ, ອົງການທຽບເທົ່າ, ເຈົ້າແຂວງ, ເຈົ້າຄອງນະຄອນຫລວງວຽງຈັນ ຊີ້ນຳບັນດາຫົວໜ່ວຍງົບປະມານ, ຂະແໜງການ ທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ; ທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດຂອງລັດ, ທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການ ເຜີຍແຜ່ແນະນຳແຈ້ງການສະບັບນີ້ ໃຫ້ບັນດາຂະແໜງການທີ່ຂຶ້ນກັບຕົນຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ໃນຂອບເຂດທົ່ວປະເທດ;

7. ແຈ້ງການສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ແຈ້ງການສະບັບເລກທີ 1584/ກງ.ຫກ ລົງວັນທີ 28 ມິຖຸນາ 2016.

ລັດຖະມົນຕີ

ນ. ທິບພະກອນ ຈັນທະວົງສາ